*ເຈ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ໂຣກຫັດ:
# ຣາຍລະອຽດສໍາລັບຜູ້ພົວພັນ

*ຜູ້ພົວພັນແມ່ນຜູ້ທີ່ຫາຍໃຈເອົາອາກາດຢູ່ບ່ອນດຽວກັນກັບຄົນທີ່ເປັນໂຣກຫັດ. ຜູ້ພົວພັນບາງຄົນທີ່ບໍ່ມີພູມຕ້ານທານອາດຕິດເຊື້ອໄດ້ ນອກຈາກວ່າເຂົາເຈົ້າຈະໄດ້ຮັບການປິ່ນປົວທີ່ປ້ອງກັນໄວ້ກ່ອນ.*

## ຂໍ້ສັງເກດສໍາລັບເຈົ້າໜ້າທີ່ດູແລສຸຂພາບ

- ຣາຍລະອຽດຢູ່ໃນເຈ້ຍຂໍ້ມູນຕ້ອງແມ່ນເຈົ້າໜ້າທີ່ດູແລສຸຂພາບເປັນຜູ້ຕື່ມໃຫ້ສໍາລັບຄົນເຈັບ ແຕ່ລະ ຄົນ (ວັນທີ່ໄດ້ຮັບເຊື້ອ, ໃຫ້ບອກດ້ວຍວ່າໄດ້ສັກ MMR ຫຼື NHIG ໃຫ້, ແລະໃຫ້ຕີກາເລກປະຈໍາຕົວແພດໃສ່)
- ທ່ານຕ້ອງໄດ້ເອົາເຈ້ຍຂໍ້ມູນເຣື່ອງໂຣກຫັດ ຂອງກະຊວງສາທາຣະນະສຸກແຫ່ງຣັດ ນຊວ ໃຫ້ຜູ້ພົວພັນດ້ວຍ: **www.health.nsw.gov.au/factsheets/infectious/measles.html**

**1.** ວັນທີ ທີ່ພົວພັນກັບຄົນທີ່ມີເຊື້ອໂຣກຫັດ: ______________________________

**2.** ໃຫ້ຣະວັງຕິດຕາມເບິ່ງອາການຂອງໂຣກຫັດຈົນຮອດວັນທີ: ____________________

**3.** ທ່ານໄດ້ຮັບການປິ່ນປົວດັ່ງກ່າວນີ້ໃນການປ້ອງກັນໂຣກຫັດ:

☐ ຢາວັກຊີນກັນໂຣກຫັດ, ໂຣກໝາກເບີດ, ໂຣກຣູແບລລ່າ **(MMR)** ຫຼັງຈາກໄດ້ພົວພັນກັບໂຣກຫັດ
ຢາວັກຊີນ MMR ເຮັດໃຫ້ຮ່າງກາຍສາມາດຜລິດພູມຕ້ານທານຂອງຮ່າງກາຍ ເພື່ອຕ້ານກັບໂຣກຫັດ ແລະ ສາມາດ ປ້ອງກັນພະຍາດບໍ່ໃຫ້ເຕີບໂຕ ຖ້າວ່າໄດ້ສັກພາຍໃນ 72 ຊົ່ວໂມງຫຼັງຈາກທີ່ໄດ້ພົວພັນກັບເຊື້ອໄວຣັສນີ້. ຢາວັກຊີນMMR ບໍ່ແມ່ນວ່າຈະເໝາະສົມຕໍ່ທຸກໆຄົນ. ແມ່ຍິງຖືພາແລະຜູ້ທີ່ພູມຕ້ານທາ ນຕ່ໍາບໍ່ຄວນສັກຢາ MMR.

☐ ສັກຢາ **Normal Human Immunoglobulin (NHIG)** ຫຼັງຈາກໄດ້ພົວພັນກັບໂຣກຫັດ
Normal human immunoglobulin (NHIG) ແມ່ນພູມຕ້ານທານຊຶ່ງກັ່ນອອກມາຈາກເລືອດທີ່ຄົນບໍຣິຈາກ. NHIG ສາມາດໃຫ້ການປ້ອງກັນລະຍະສັ້ນຕໍ່ການຕິດເຊື້ອຖ້າຫາກວ່າໄດ້ສັກພາຍໃນ 7 ມື້ຫຼັງຈາກໄດ້ພົວພັນກັບເຊື້ອໂຣກ. NHIG ບໍ່ສາມາດໃຫ້ການປ້ອງກັນລະຍະຍາວ. ຂໍແນະນໍາໃຫ້ສັກ MMR ແຕ່ວ່າຄວນໂຈະໄວ້ເປັນເວລາ 5 ເດືອນ ຫຼັງຈາກສັກ NHIG.

☐ ບໍ່ມີການປິ່ນປົວຫຼັງຈາກພົວພັນກັບໂຣກຫັດແລ້ວ
ຖ້າຫາກວ່າໂຣກຫັດໄດ້ເກີດຂຶ້ນກວ່າ 7 ວັນມາແລ້ວ, MMR ແລະ NHIG ແມ່ນໃຊ້ບໍ່ໄດ້ຜົນ. ທ່ານຄວນສັງເກດ ເບິ່ງ ວ່າມີອາການຂອງໂຣກຫັດເກີດຂຶ້ນບໍ.

# ຣາຍລະອຽດທົ່ວໄປສຳລັບຜູ້ພົວພັນ

## ຜູ້ພົວພັນກັບໂຣກຫັດແມ່ນໃຜ?

"ຜູ້ພົວພັນ" ແມ່ນຜູ້ທີ່ຫາຍໃຈເອົາອາກາດຢູ່ບ່ອນດຽວກັນກັບຄົນອື່ນທີ່ກຳລັງຕິດໂຣກຫັດຢູ່ (ຕົວຢ່າງ, ຢູ່ໃນຫ້ອງໆດຽວກັບຄົນ ທີ່ເປັນໂຣກຫັດ). ຖ້າວ່າເຊື້ອໂຣກໄດ້ແຜ່ຜາຍໃຫ້ຜູ້ພົວພັນທີ່ບໍ່ມີພູມຕ້ານທານ, ຜູ້ພົວພັນນັ້ນກໍຈະເກີດມີອາການໂຣກຫັດໃນລະຫວ່າງ 7 ຫາ 18 ມື້ ຫຼັງຈາກທີ່ໄດ້ຫາຍໃນເອົາອາກາດບ່ອນດຽວກັນ.

ຜູ້ພົວພັນຫຼາຍໆຄົນຈະມີພູມຕ້ານທານຢູ່ແລ້ວເພາະວ່າເຂົາເຈົ້າເຄີຍເປັນໂຣກຫັດມາກ່ອນຫຼືໄດ້ສັກຢາກັນ ແລະ ສະນັ້ນຈຶ່ງຈະ ບໍ່ຕິດ ພະຍາດນີ້. ຜູ້ພົວພັນຄົນອື່ນໆທີ່ບໍ່ມີພູມຕ້ານທານອາດຕິດເຊື້ອໄດ້ ແລະ ອາດຈະນຳເຊື້ອໄປແຜ່ຜາຍເຊື້ອໂຣກຕໍ່ໃຫ້ຄົນອື່ນອີກ. ບາງຄັ້ງ ກໍສາມາດຢຸດການຕິດເຊື້ອໄດ້ໃນກໍຣະນີຂອງຄົນທີ່ບໍ່ມີພູມຕ້ານທານ - ໂດຍການສັກຢາວັກຊີນ MMR ຫຼືໂດຍການສັກຢາ normal human immunoglobulin (NHIG) ໃຫ້.

## ແມ່ນໃຜແດ່ທີ່ສ່ຽງຕໍ່ການຕິດເຊື້ອນີ້?

ໂຣກຫັດແມ່ນໂຣກທີ່ເປັນກັນແຜ່ຫຼາຍກ່ອນປີ 1966, ເພາະສະນັ້ນຄົນທີ່ເກີດກ່ອນນັ້ນແມ່ນມີພູມຕ້ານທານ.

ພວກທີ່ສ່ຽງຕໍ່ການຕິດເຊື້ອຮວມມີ:

- ຄົນທີ່ເກີດລະຫວ່າງຫຼືຫຼັງຈາກປີ 1966 ຊຶ່ງບໍ່ເຄີຍເປັນໂຣກຫັດມາກ່ອນແລະບໍ່ໄດ້ສັກຢາວັກຊີນ MMR ສອງຄັ້ງ ເມື່ອອາຍຸໄດ້ 12 ເດືອນ.
- ຄົນທີ່ມີລະບົບພູມຕ້ານທານອ່ອນແອ (ເຊັ່ນ ຄົນທີ່ໄດ້ຮັບການປິ່ນປົວມະເຮັງແບບ chemotherapy ຫຼື radiotherapy ຫຼືຄົນທີ່ກິນຢາສເຕຣອຍແບບແຮງ) ເຖິງແມ່ນວ່າເຂົາຈະໄດ້ສັກຢາເຕັມຊຸດແລ້ວຫຼືເຄີຍເປັນໂຣກຫັດມາກ່ອນແລ້ວກໍຕາມ.

## ຜູ້ພົວພັນຕ້ອງເຮັດຫຍັງແດ່?

- ໃຫ້ສັງເກດເບິ່ງວ່າຈະມີອາການຂອງໂຣກຫັດບໍຈົນກວ່າຈະຮອດມື້ທີ່ຂຽນບອກໄວ້ຢູ່ທາງໜ້າຂອງເຈັ້ຍໃບນີ້. ອາການຕົ້ນໆ ຂອງໂຣກຫັດແມ່ນ ເປັນໄຂ້, ຂີ້ມູກຍ້ອຍ, ຕາແດງແລະນ້ຳຕາໄຫຼ ແລະ ໄອ. ສ່ວນຜື່ນນັ້ນຈະເກີດທີຫຼັງ.
- ເພື່ອຄວາມຣະມັດຣະວັງ, ເປັນການດີທີ່ທ່ານຄວນຫຼີກເວັ້ນບໍ່ໃກ້ຊິດກັບຄົນທີ່ອາດສ່ຽງຕໍ່ການຕິດເຊື້ອຈົນກວ່າວ່າ 18ມື້ ຈະ ຜ່ານໄປຫຼັງຈາກທ່ານຕິດເຊື້ອ. ຖ້າທ່ານບໍ່ສາມາດຫຼີກເວັ້ນການພົວພັນກັບຄົນເຫຼົ່ານັ້ນໄດ້ກໍຕ້ອງ ໄດ້ໃຫ້ເຂົາເຈົ້າຮູ້ວ່າທ່ານ ເປັນໂຣກຫັດຢູ່.

## ຖ້າທ່ານ (ຫຼືລູກຂອງທ່ານ) ມີອາການຂອງໂຣກຫັດ

- ຢ່າໄປບ່ອນສາທາຣະນະຊົນ (ເຊັ່ນບ່ອນເຮັດວຽກ, ໂຮງຮຽນ, ສູນຝາກເດັກ ຫຼື ສູນການຄ້າ) ຫຼືໃຊ້ຣົດໂດຍສານ.
- ໃຫ້ໄປຫາໝໍ, ຖ້າເປັນໄປໄດ້ໃຫ້ໄປຫາໝໍປະຈຳຄອບຄົວ, ໂດຍດ່ວນທີ່ສຸດເພື່ອຢັ້ງຢືນການກວດຫາພະຍາດ. ໃຫ້ຖືເອົາເຈ້ຍນີ້ໄປໃຫ້ ທ່ານໝໍເບິ່ງນຳ.
- ໃຫ້ໂທຣະສັບຫາຄລີນິກທ່ານໝໍກ່ອນໜ້າຈະໄປຮອດເພື່ອເຕືອນໃຫ້ເຂົາເຈົ້າຮູ້ເຖິງອາການຂອງທ່ານ ແລະ ເພື່ອໃຫ້ເວລາ ເຂົາເຈົ້າຈັດແຈງບ່ອນໄວ້ຖ້າເພື່ອຈະໄດ້ກວດເບິ່ງທ່ານຢ່າງປອດພັຍແລະບໍ່ ໃຫ້ເອົາເຊື້ອໄປຕິດຄົນອື່ນ.
- ໃຫ້ໂທຣະສັບຫາໜ່ວຍສາທາຣະສຸກ ຕາມເລກໂທຣະສັບຂ້າງລຸ່ມນີ້.

## ຖ້າຕ້ອງການຣາຍລະອຽດເພີ້ມເຕີມ

- ເຈ້ຍຂໍ້ມູນທົ່ວໆໄປກ່ຽວກັບໂຣກຫັດມີທີ່: [http://www.health.nsw.gov.au/factsheets/infectious/measles.html](http://www.health.nsw.gov.au/factsheets/infectious/measles.html)

**ຣາຍລະອຽດເພີ້ມເຕີມ - ພແນກສາທາຣະນະສຸກແຫ່ງຣັດ NSW**



**1300 066 055**

[www.health.nsw.gov.au](http://www.health.nsw.gov.au)